ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

**ກົມຄຸ້ມຄອງທະນາຄານທຸລະກິດ**

**ເລກທີ 339 /ກຄທ**

**ນະຄອນຫລວງວຽງຈັນ, ວັນທີ** 24 AUG 2016

# <u>ແຈ້ງການ</u>

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ.

**ເລື່ອງ:** ການຈັດຕັ້ງປະຕິບັດເນື້ອໃນບາງມາດຕາຂອງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ.

- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006.
- ອີງຕາມຂໍ້ຕົກລົງ ວ່າດ້ວຍການການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານ ທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມາດຕາ 11 ວັກ 3 ຂອງຂໍ້ຕົກລົງ ວ່າດ້ວຍການການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ສະບັບເລກທີ 42/ທຫລ, ລົງວັນທີ 15 ມັງກອນ 2016 ໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບກັນ, ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານ ແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ໃຫ້ຈັດຕັ້ງປະຕິບັດມາດຕາ 11 ວັກ 3 ຂອງຂໍ້ຕົກລົງດັ່ງກ່າວ ດັ່ງນີ້:

1. ໜ່ວຍບໍລິການ ບໍ່ສາມາດພິຈາລະນາອະນຸມັດ ສິນເຊື່ອໃຫ້ແກ່ລູກຄ້າໄດ້ ໂດຍຫົວໜ້າໜ່ວຍບໍລິການບໍ່ສາມາດອະນຸມັດສິນເຊື່ອ ແລະ ລົງລາຍເຊັນສັນຍາສິນເຊື່ອ ຫຼື ສັນຍາເງິນກູ້ໃນນາມທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດໄດ້;
2. ໜ່ວຍບໍລິການ ສາມາດປະຕິບັດໄດ້ ດັ່ງນີ້:
   - ສະໜອງຂໍ້ມູນ ຫຼື ອະທິບາຍລາຍລະອຽດກ່ຽວກັບຜະລິດຕະພັນສິນເຊື່ອຂອງທະນາຄານ ໃຫ້ແກ່ລູກຄ້າ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

- ຮັບສຳນວນເອກະສານຂໍສິນເຊື່ອຂອງລູກຄ້າ;
- ເກັບກຳຂໍ້ມູນຂອງລູກຄ້າ;
- ປະເມີນ ຫຼື ວິເຄາະລູກຄ້າ ຫຼື ປະເມີນຫຼັກຊັບຄ້ຳປະກັນ ຖ້າມີພະນັກງານຮັບຜິດຊອບວຽກງານດັ່ງກ່າວ ປະຈຳໜ່ວຍບໍລິການນັ້ນ;
- ສົ່ງສຳນວນເອກະສານຂໍສິນເຊື່ອຂອງລູກຄ້າ ໃຫ້ສາຂາ ຫຼື ສຳນັກງານໃຫຍ່ ທີ່ຕົນຂຶ້ນກັບ ເພື່ອພິຈາລະນາອະນຸມັດ;
- ເບີກເງິນກູ້ທີ່ສາຂາ ຫຼື ສຳນັກງານໃຫຍ່ ໄດ້ອະນຸມັດແລ້ວ ໃຫ້ແກ່ລູກຄ້າ ຕາມການມອບໝາຍຂອງສາຂາ ຫຼື ສຳນັກງານໃຫຍ່ ທີ່ຕົນຂຶ້ນກັບ;
- ຮັບເງິນ ທີ່ລູກຄ້າມາຊຳລະຕາມງວດຊຳລະເງິນກູ້ ຕາມການມອບໝາຍຂອງສາຂາ ຫຼື ສຳນັກງານໃຫຍ່ ທີ່ຕົນຂຶ້ນກັບ;
- ສົ່ງເອກະສານການແຈ້ງຊຳລະໜີ້ສິນທັງຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ລູກຄ້າ ຕາມການມອບໝາຍຂອງສາຂາ ຫຼື ສຳນັກງານໃຫຍ່ ທີ່ຕົນຂຶ້ນກັບ.

ສຳລັບການລົງບັນຊີສິນເຊື່ອ ແມ່ນລົງຢູ່ສາຂາ ຫຼື ສຳນັກງານໃຫຍ່ ແລະ ເອກະສານສຳນວນສິນເຊື່ອ, ຫຼັກຊັບຄ້ຳປະກັນ ແມ່ນໃຫ້ເກັບຮັກສາໄວ້ຢູ່ສາຂາ ຫຼື ສຳນັກງານໃຫຍ່.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ**

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຄຸ້ມຄອງທະນາຄານທຸລະກິດ

ພຸດທະໄຊ **ສີວິໄລ**